Lao People's Democratic Republic
Peace Independence Democracy Unity Prosperity
----------------------------

Ministry of Finance
Cabinet Office No.0163 / ຫກງ

Vientiane capital, date: 27 / 01 / 2021

## Notification

To: Customs Department
Director of Customs Office V
Director of Friendship Bridge 1 International Customs Border Checkpoint
Director of Lao Logistic State Enterprise (LLSE)
Import and Export companies for all goods
Banque Pour Le Commerce Exterieur Lao Public (BCEL)
Lao Development Bank (LDB)

Subject: Application of LNSW platform (Lao National Single Window) to management of Import of All goods at Friendship Bridge 1 International Customs Border Checkpoint

- Reference to Agreement of Minister of Finance on Organization and Activities of Finance Cabinet; No. 5050/ກງ, dated on 24 December 2019
- Reference to the Instruction of Ministry of Finance on the Use of LNSW platform No. 4217/ກງ, dated on 28 December 2018
- Reference to the Agreement of Ministry of Finance on Validation of the Use of LNSW system No. 0204/ກງ, dated 15 Jan 2019.
- Reference to Additional Instruction of Customs Department No. 04145/ກພສ, dated on 23 May 2019 on the Use of LNSW;
- Reference to Proposal Letter of Customs Department, No. ……./ກພສ, dated on ………

In order to modernize customs activities, centralize, ensure the effectiveness and smoothness of the use of LNSW platform at FB1 for management of import of all goods

## Head of Finance Cabinet has issued this notification:

1. Start to implement Lao National Single Window (LNSW) platform to management of import of all goods at FB1 (include all goods under exemption or suspension of customs duties and other obligations)
2. Importers and exporters for all goods are assigned to pay customs and duties and other obligation fees as well as fees and service fees of other relevant agencies in one single point via service units or electronic system of BCEL and LDB, which include BCEL i-Banking, BCEL One, LDB Corporate Banking, cash, money transfer and cheque based on the relevant regulations
3. LNSW Co.,Ltd is assigned to collect service fee for using such a system at the rate of 120,000 Kip (One hundred and twenty thousand kip) for one transaction as mentioned in the Concession agreement, which excludes customs and duties, tax, fees and other service fees of relevant agencies
4. Regards the traders who have not been registered to use the system, they must hurry to have that done, their user accounts should be issued urgently, before 22 February 2021. Then, all of imports of all goods (including the goods under exemption or suspension of customs and duties and other obligation fees) of all import companies processed at FB1 must be done by using LNSW platform from 23 February 2021 onwards
5. Customs Department, Customs Office V, Friendship Bridge 1 International Customs Border Checkpoint, Lao Logistic State Enterprise (LLSE), Import and Export companies for all goods, BCEL, Lao Development Bank and other relevant sectors should be informed and together implement LNSW platform to reach the plan defined
6. In the practical implementation, if there are any difficulties, Customs Department should be informed for further resolution to deal with the difficult situations on time. This notification is effective on the signing date onwards,

**Head of Finance Cabinet**

**Mr. Somboun INTHAPHATHA**

**Copy to**:

| | | |
|---|---|---|
| 1. | Deputy Prime Minister, Minister of Finance | 1 copy for report |
| 2. | Ministry of Industry and Commerce | 1 copy for report |
| 3. | Ministry of Public Work and Transports | 1 copy for report |
| 4. | Ministry of Health | 1 copy for report |
| 5. | Ministry of Agriculture and Forestry | 1 copy for report |
| 6. | Finance Cabinet Office | 1 copy |
| 7. | Customs Department, Ministry of Finance | 1 copy for implementation |
| 8. | Customs Office V (5) | 1 copy for implementation |
| 9. | FB1 Customs Border Checkpoint | 1 copy for implementation |
| 10. | Director of Lao Logistic State Enterprise | 1 copy for implementation |
| 11. | Banque Pour Le Commerce Exterieur Lao | 1 copy for implementation |
| 12. | Lao Development Bank | 1 copy for implementation |
| 13. | Lao National Single Window | 1 copy for implementation |

**Contact person**:

Mr Khampoun INPENGLATHSABOUD Tel: 020 59441818
Mr Anousack SISAARD Tel: 020 2320 0999

Training in the use of the LNSW is being offered free of charge and takes place from Monday to Friday at the LNSW Office, according to BIVAC Lao Co., Ltd, which partners with the ministry to implement the LNSW.

For more details, please do not hesitate to visit the LNSW office in Naxay village, Xaysettha district, at H 429, Unit 41, 3rd floor. Or call WhatsApp 020 5489 1405, 020 9861 7780 or 020 5554 4640 to register.
Email: helpdesk@laonsw.net
Website: www.laonsw.net

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການກະຊວງ ເລກທີ:0163 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ:໒໗ ມັງກອນ ໒໐໒໑

## ແຈ້ງການ

ເຖິງ: ກົມພາສີ, ກອງຄຸ້ມຄອງພາສີ V, ດ່ານພາສີສາກົນຂົວມິດຕະພາບ1, ລັດວິສາຫະກິດບໍລິການສິນຄ້າຜ່ານແດນ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ, ບັນດາບໍລິສັດນຳເຂົ້າສິນຄ້າ, ເຄື່ອງຂອງທຸກໆປະເພດ.

ເລື່ອງ: ການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ(Lao National Single Window) ເຂົ້າສູ່ການຄຸ້ມຄອງການນຳເຂົ້າສິນຄ້າ, ເຄື່ອງຂອງທຸກໆປະເພດ ຢູ່ທີ່ດ່ານພາສີສາກົນຂົວມິດຕະພາບ 1.

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019, ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການກະຊວງການເງິນ;
- ອີງຕາມບົດແນະນຳຂອງກະຊວງການເງິນ, ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018, ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມຂໍ້ຕົກລົງຂອງກະຊວງການເງິນ, ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019, ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມ ຄຳແນະນຳເພີ່ມເຕີມຂອງກົມພາສີ, ສະບັບເລກທີ 04145/ກພສ, ລົງວັນທີ 23 ພຶດສະພາ 2019, ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມ ໜັງສືສະເໜີຂອງກົມພາສີ, ສະບັບເລກທີ 00125 /ກພສ, ລົງວັນທີ 12 ມັງກອນ 2020

ເພື່ອເປັນການຫັນວຽກງານພາສີເປັນທັນສະໄໝ, ລວມສູນ, ຮັບປະກັນປະສິດທິຜົນ ແລະ ຄວາມຄ່ອງຕົວ ໃນການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຢູ່ດ່ານພາສີສາກົນຂົວມິດຕະພາບ 1 ເຂົ້າໃນການຄຸ້ມຄອງການນຳເຂົ້າ, ສິນຄ້າເຄື່ອງຂອງທຸກປະເພດ.

## ຫົວໜ້າຫ້ອງການກະຊວງອອກແຈ້ງການ:

1. ໃຫ້ຈັດຕັ້ງປະຕິບັດນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window "LNSW") ເຂົ້າໃນການຄຸ້ມຄອງການນຳເຂົ້າ ສິນຄ້າ, ເຄື່ອງຂອງ ທຸກໆປະເພດ ຜ່ານດ່ານພາສີສາກົນຂົວມິດຕະພາບ 1(ລວມທັງສິນຄ້າປະເພດຍົກເວັ້ນ ຫຼື ງົດເກັບພາສີ);
2. ໃຫ້ບັນດາຜູ້ປະກອບການທັງໝົດ ທີ່ນຳເຂົ້າທຸກໆປະເພດສິນຄ້າ, ເຄື່ອງຂອງຊຳລະຄ່າພາສີ, ອາກອນ ແລະ ພັນທະອື່ນໆ ພ້ອມທັງຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການກ່ຽວຂ້ອງ ແບບລວມສູນ ຜ່ານໜ່ວຍບໍລິການ ຫຼື ລະບົບເອເລັກໂຕຣນິກ ຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ທະນາຄານພັດທະນາລາວ ເຊັ່ນ: ລະບົບ i-Banking, BCEL One Corportate Banking, ເງິນສົດ, ເງິນໂອນ ແລະ ເງິນແຊັກ ຕາມລະບຽບການທີ່ກ່ຽວຂ້ອງ.
3. ໃຫ້ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຈັດເກັບຄ່າບໍລິການນຳໃຊ້ລະບົບດັ່ງກ່າວ ໃນອັດຕາ 120,000 (ໜຶ່ງແສນຊາວພັນ) ກີບ ຕໍ່ການແຈ້ງພາສີເປັນລາຍລະອຽດ 1ຊຸດ, ຕາມທີ່ກຳນົດໄວ້ໃນສັນຍາສຳປະທານໂຄງການ ຊຶ່ງບໍ່ລວມເອົາຄ່າພາສີ, ຄ່າອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການທີ່ກ່ຽວຂ້ອງ.
4. ສຳລັບຜູ້ປະກອບການທີ່ຍັງບໍ່ທັນໄດ້ລົງທະບຽນ ແລະ ຝຶກອົບຮົມການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ນັ້ນ, ແມ່ນໃຫ້ຊຸ່ມຊ່ຽວດຳເນີນຂັ້ນຕອນການລົງທະບຽນ, ອອກລະຫັດຜູ້ນຳໃຊ້ໂດຍດ່ວນ ກ່ອນວັນທີ 22 ກຸມພາ 2021. ຈາກນັ້ນນັບແຕ່ວັນທີ 23 ກຸມພາ 2021 ເປັນຕົ້ນໄປ ການນຳເຂົ້າທຸກໆປະເພດສິນຄ້າ ແລະ ທຸກໆບໍລິສັດທີ່ມີການນຳເຂົ້າສິນຄ້າ (ລວມທັງສິນຄ້າປະເພດຍົກເວັ້ນ ຫຼື ງົດເກັບພາສີ) ທີ່ຜ່ານດ່ານພາສີສາກົນຂົວມິດຕະພາບ 1 ຕ້ອງດຳເນີນການແຈ້ງພາສີເປັນລາຍລະອຽດ ຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດທັງໝົດ.
5. ມອບໃຫ້ກົມພາສີ, ກອງຄຸ້ມຄອງພາສີ V, ດ່ານພາສີສາກົນຂົວມິດຕະພາບ1, ລັດວິສາຫະກິດບໍລິການສິນຄ້າຜ່ານແດນ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ, ບັນດາບໍລິສັດນຳເຂົ້າທຸກໆປະເພດສິນຄ້າ, ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດໃຫ້ສຳເລັດຕາມລະດັບຄາດໝາຍ.
6. ໃນການຈັດຕັ້ງປະຕິບັດຕົວຈິງຖ້າພົບຂໍ້ຫຍຸ້ງຍາກໃຫ້ລາຍງານກົມພາສີ, ເພື່ອມີວິທີການແກ້ໄຂໃຫ້ທັນສະພາບການ.
7. ແຈ້ງການສະບັບນີ້, ມີຜົນສັກສິດນຳໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າຫ້ອງການກະຊວງ**

ສົມບູນ ອິນທະປັດຖາ

ບ່ອນສົ່ງ:

| | | |
|---|---|---|
| 1. | ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ | 1 ສະບັບ ຕາງລາຍງານ |
| 2. | ກະຊວງອຸດສາຫະກຳ ແລະ ການຄ້າ | 1 ສະບັບ ຕາງລາຍງານ |
| 3. | ກະຊວງໂຍທາທິການ ແລະ ຂົນສົ່ງ | 1 ສະບັບ ຕາງລາຍງານ |
| 4. | ກະຊວງສາທາລະນະສຸກ | 1 ສະບັບ ຕາງລາຍງານ |
| 5. | ກະຊວງກະສິກຳ ແລະ ປ່າໄມ້ | 1 ສະບັບ ຕາງລາຍງານ |
| 6. | ຫ້ອງການກະຊວງການເງິນ | 1 ສະບັບ ເພື່ອສຳເນົາ |
| 7. | ກົມພາສີ, ກະຊວງການເງິນ | 1 ສະບັບ ເພື່ອສຳເນົາ |
| 8. | ກອງຄຸ້ມຄອງພາສີ V | 1 ສະບັບ ເພື່ອປະຕິບັດ |
| 9. | ດ່ານພາສີສາກົນຂົວມິດຕະພາບ1 | 1 ສະບັບ ເພື່ອປະຕິບັດ |
| 10. | ລັດວິສາຫະກິດບໍລິການສິນຄ້າຜ່ານແດນ | 1 ສະບັບ ເພື່ອປະຕິບັດ |
| 11. | ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 1 ສະບັບ ເພື່ອປະຕິບັດ |
| 12. | ທະນາຄານພັດທະນາລາວ | 1 ສະບັບ ເພື່ອປະຕິບັດ |
| 13. | ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ | 1 ສະບັບ ເພື່ອປະຕິບັດ |

ຕິດຕໍ່ພົວພັນ:
ທ່ານ ຄຳປຸ່ນ ອິນແປງລາດຊະບຸດ, ໂທ 020 5944 1818
ທ່ານ ອານຸສັກ ສີສະອາດ, ໂທ 020 2320 0999